COUNT US IN 2020

There's Power In Being Counted

ASIAN AMERICANS ADVANCING JUSTICE

COUNTUSIN2020.ORG

# ຂ້ອຍຈະຕອບການສໍາຫຼວດສໍາມະໂນຄົວໃນປີ 2020 ແນວໃດ ແລະ ເພິ່ນຈະຖາມຂ້ອຍຫຍັງແດ່?

***ມີຄໍາຖາມບໍ? ໂທຫາເບີສາຍດ່ວນການສໍາຫຼວດສໍາມະໂນຄົວຂອງພວກເຮົາໄດ້ທີ່ເບີ 844-2020-API ສໍາລັບພາສາອັງກິດ ແລະ ພາສາອື່ນໆ. ສໍາລັບຂໍ້ມູນເພີ່ມເຕີມ, ເຂົ້າເບິ່ງເວັບໄຊທ໌ www.CountUsIn2020.org/hotline***

ການສໍາຫຼວດສໍາມະໂນຄົວປະຈໍາປີ 2020 ຈະນັບຄົນທຸກຄົນທີ່ອາໄສຢູ່ໃນສະຫະລັດ. ການສໍາຫຼວດສໍາມະໂນຄົວເປັນແບບສອບຖາມສັ້ນໆ ທີ່ຂໍຂໍ້ມູນພື້ນຖານກ່ຽວກັບຄົວເຮືອນຂອງທ່ານແລະຜູ້ທີ່ອາໄສຢູ່ໃນນັ້ນ.ຄໍາຕອບສ່ວນບຸກຄົນຂອງທ່ານເປັນຄວາມລັບແລະບໍ່ສາມາດແບ່ງປັນກັບອົງກອນຂອງລັດຖະບານອື່ນໆ, ລວມທັງອົງກອນບັງຄັບໃຊ້ກົດຫມາຍການເຂົ້າເມືອງ, ຕໍາຫຼວດຫຼືເຈົ້າຫນ້າທີ່ທີ່ຢູ່ອາໃສ.ລັດຖະບານໃຊ້ການນັບຈໍານວນປະຊາກອນເພື່ອແບ່ງປັນການເປັນຕົວແທນທາງດ້ານການເມືອງແລະເພື່ອກໍານົດວ່າບ່ອນໃດບ້າງທີ່ຕ້ອງໃຊ້ຈັບພະຍາກອນ.

## ຂ້ອຍຈະຕອບການສໍາຫຼວດສໍາມະໂນຄົວໃນປີ 2020 ແນວໃດ?

ໃນເດືອນມີນາ 2020. ກົມສໍາຫຼວດສໍາມະໂນຄົວຈະສົ່ງຂໍ້ມູນທາງໄປສະນີຫາຄົວເຮືອນເພື່ອເຊີນພວກເຂົາເຈົ້າໃຫ້ຕອບການສໍາຫຼວດສໍາມະໂນຄົວ.ມີສາມວິທີທີ່ຈະເຂົ້າຮ່ວມ:

| | |
|---|---|
| ທາງອອນໄລນ໌ | ເປັນຄັ້ງທໍາອິດທີ່, ທ່ານຈະສາມາດປະກອບແບບຟອມການສໍາຫຼວດສໍາມະໂນຄົວຂອງທ່ານອອນໄລນ໌ໄດ້.ຄົວເຮືອນສ່ວນໃຫຍ່ຈະໄດ້ຮັບຈົດຫມາຍເຊີນໃຫ້ພວກເຂົາຕອບແບບອອນໄລນ໌, ດ້ວຍຫມາຍເລກ ID ຄົວເຮືອນທີ່ເປັນເອກະລັກສະເພາະ ແລະທີ່ຢູ່ເວັບໄຊທ໌ຂອງກົມສໍາຫຼວດສໍາມະໂນຄົວຢ່າງເປັນທາງການ.<br><br>*ແບບຟອມການຕອບຄໍາຖາມດ້ວຍຕົນເອງທາງອິນເຕີເນັດມີໃຫ້ 12 ພາສາທີ່ບໍ່ແມ່ນພາສາອັງກິດລວມທັງຈີນ (ຢ່າງງ່າຍ), ພາສາຍີ່ປຸ່ນ, ພາສາເກົາຫຼີ, ພາສາຕາກາລັອກ, ແລະພາສາຫວຽດນາມ.* |
| ທາງໂທລະສັບ | ທ່ານສາມາດໂທຫາເບີຊ່ວຍເຫຼືອຕອບແບບສອບຖາມການສໍາຫຼວດສໍາມະໂນຄົວເພື່ອຖາມຄໍາຖາມແລະເພື່ອຕອບການສໍາຫຼວດສໍາມະໂນຄົວທາງໂທລະສັບໄດ້.<br><br>*ການຊ່ວຍເຫຼືອທາງໂທລະສັບມີໃຫ້ໃນພາສາອັງກິດແລະພາສາທີ່ບໍ່ແມ່ນພາສາອັງກິດ 12 ພາສາ ລວມທັງ ພາສາຈີນ (ແມນດາຣິນແລະແຄນໂຕນີສ), ພາສາຍີ່ປຸ່ນ, ພາສາເກົາຫຼີ, ພາສາຕາກາລັອກ, ແລະພາສາຫວຽດນາມ. ຜ່ານຫມາຍເລກໂທຟຣີຂອງກົມສໍາຫຼວດສໍາມະໂນຄົວ ແຕ່ລະພາສາ, ຜູ້ໂທສາມາດໄດ້ຮັບຂໍ້ມູນເພີ່ມເຕີມກ່ຽວກັບການສໍາຫຼວດສໍາມະໂນຄົວ, ຖາມຄໍາຖາມແລະຕອບຄໍາຖາມການສໍາຫຼວດສໍາມະໂນຄົວຂອງເຂົາເຈົ້າຜ່ານທາງໂທລະສັບໄດ້.* |
| ທາງເຈ້ຍ | ທ່ານສາມາດຕອບແບບຟອມທາງເຈ້ຍກໍ່ໄດ້. ບາງເຮືອນ - ປະມານຫນຶ່ງໃນຫ້າ - ຈະໄດ້ຮັບແບບຟອມໃນການສົ່ງໄປສະນີຄັ້ງທໍາອິດ. ທຸກໆຄົນຈະໄດ້ຮັບເຈ້ຍແບບຟອມຈາກໄປສະນີຄັ້ງທີສີ່.<br><br>*ເຈ້ຍແບບຟອມມີໃຫ້ໃນພາສາອັງກິດແລະພາສາສະເປນເທົ່ານັ້ນ.* |

## ຂ້ອຍຈະຕ້ອງຕອບການສຳຫຼວດສຳມະໂນຄົວເມື່ອໃດ?

ກົມສຳຫຼວດສຳມະໂນຄົວຈະສົ່ງຂໍ້ມູນທາງໄປສະນີຫຼາຍເທື່ອ, ເພື່ອຊັກຊວນໃຫ້ປະຊາຊົນຕອບ:

| | |
|---|---|
| ເດືອນມີນາ<br>12-20 | ກົມສຳຫຼວດສຳມະໂນຄົວຈະສົ່ງບັດເຊີນທາງໄປສະນີໃຫ້ຕອບການສຳຫຼວດສາມເທື່ອ. |
| ເດືອນມີນາ<br>16-24 | ຈົດຫມາຍເຕືອນຈະຖືກສົ່ງໃຫ້ຄົວເຮືອນທີ່ຍັງບໍ່ມັນໄດ້ຕອບເທື່ອ. |
| ເດືອນມີນາ 26 -ເດືອນເມສາ 3 | ໄປສະນີຍະບັດແຈ້ງເຕືອນຈະຖືກສົ່ງໄປຍັງຄົວເຮືອນທີ່ຍັງບໍ່ທັນໄດ້ຕອບເທື່ອ. |
| ເດືອນເມສາ 8-16 | ຈົດຫມາຍແຈ້ງເຕືອນແລະເຈ້ຍແບບຟອມຈະຖືກສົ່ງໄປຄົວເຮືອນທີ່ຍັງບໍ່ທັນໄດ້ຕອບເທື່ອ. |
| ເດືອນເມສາ 20-27 | ໄປສະນີຍະບັດແຈ້ງເຕືອນອັນສຸດທ້າຍຈະຖືກສົ່ງອອກໄປ. |
| ເດືອນພຶດສະພາ13 | ພະນັກງານກົມສຳຫຼວດສຳມະໂນຄົວຈະເລີ່ມຕົ້ນໄປຢ້ຽມຢາມຄົວເຮືອນທີ່ຍັງບໍ່ທັນໄດ້ຕອບເທື່ອ. |

## ການສຳຫຼວດສຳມະໂນຄົວປີ 2020 ຈະຖາມຫຍັງຂ້ອຍ?

ການສຳຫຼວດສຳມະໂນຄົວປີ 2020 ຄວນໃຊ້ເວລາພຽງບໍ່ຫຼາຍນາທີ ເພື່ອເຮັດໃຫ້ສຳເລັດແລະຖາມຄຳຖາມ ຂ້າງລຸ່ມນີ້.
**ການສຳຫຼວດສຳມະໂນຄົວປີ 2020 ຈະຖາມກ່ຽວກັບຄົວເຮືອນຂອງທ່ານ.**

| | |
|---|---|
| ຈຳນວນຄົນທີ່ອາໄສຢູ່ຫຼືຢູ່ໃນທີ່ຢູ່ຂອງທ່ານໃນວັນທີ 1 ເມສາ. | *ລວມທຸກຄົນໃນເຮືອນຂອງທ່ານ, ເຖິງແມ່ນວ່າພວກເຂົາບໍ່ກ່ຽວຂ້ອງກັບທ່ານ.ການສຳຫຼວດສຳມະໂນຄົວນັບປະຊາຊົນທຸກຄົນໃນສະຫະລັດອາເມລິກາ, ລວມທັງເດັກນ້ອຍ, ຄົນບໍ່ມີພົນລະເມືອງ, ຜູ້ເຊົ່າ - ທຸກຄົນ.* |
| ທ່ານເປັນເຈົ້າຂອງເຮືອນຫຼືເຊົ່າເຮືອນຢູ່? | *ຕອບວ່າທ່ານເປັນເຈົ້າຂອງເຮືອນຫຼືເຊົ່າເຮືອນຢູ່* |
| ເບີໂທລະສັບ | *ກົມສຳຫຼວດສຳມະໂນຄົວພຽງແຕ່ຈະໃຊ້ຫມາຍເລກໂທລະສັບຂອງທ່ານຖ້າຈຳເປັນເພື່ອທຸລະກິດຂອງກົມສຳຫຼວດສຳມະໂນຄົວຢ່າງເປັນທາງການ.* |

**ການສຳຫຼວດສຳມະໂນຄົວປີ 2020 ຈະຖາມກ່ຽວກັບບຸກຄົນແຕ່ລະຄົນທີ່ອາໄສຢູ່ໃນຄົວເຮືອນຂອງທ່ານ.**

| | |
|---|---|
| ຊື່, ອາຍຸ, ວັນເດືອນປີເກີດ, ແລະເພດ. | *ປ້ອນຊື່, ອາຍຸ, ແລະວັນເດືອນປີເກີດຂອງແຕ່ລະຄົນ. ກະລຸນາສັງເກດວ່າສຳລັບເພດ, ກົມສຳຫຼວດສຳມະໂນຄົວພຽງແຕ່ໃຫ້ຄຳຕອບເລືອກວ່າຊາຍແລະຍິງເທົ່ານັ້ນ.* |
| ຄວາມສຳພັນກັບບຸກຄົນທີ່ເຮັດປະກອບແບບຟອມ. | *ມີລາຍຊື່ຄວາມສຳພັນທີ່ທ່ານສາມາດເລືອກໄດ້, ລວມທັງຄູ່ສົມລົດ (ເພດດຽວກັນຫຼືກົງກັນຂ້າມ), ອ້າຍຫຼືເອື້ອຍ, ພໍ່ແມ່, ເພື່ອນຮ່ວມຫ້ອງ, ຫຼືຢ່າງອື່ນ* |
| ເຊື້ອຊາດ | *ທ່ານສາມາດເລືອກຫນຶ່ງຫຼືຫຼາຍເຊື້ອຊາດກໍ່ໄດ້.ຖ້າທ່ານລະບຸວ່າຕົນເອງເປັນຄົນຫຼາຍເຊື້ອຊາດ ທ່ານສາມາດຫມາຍກ່ອງດຽວຫຼືຫຼາຍກ່ອງສຳລັບເຊື້ອຊາດຂອງທ່ານ ແລະຂຽນລາຍລະອຽດເພີ່ມເຕີມກ່ຽວກັບພື້ນຫລັງ* |

| | |
|---|---|
| | *ເຊື້ອຊາດຂອງທ່ານ.*<br><br>*ບໍ່ໄດ້ມີກ່ອງໃຫ້ຫມາຍໄດ້ທຸກກຸ່ມເຊື້ອຊາດ. ຖ້າກຸ່ມເຊື້ອຊາດຂອງທ່ານ ບໍ່ໄດ້ມີລະບູໄວ້, ທ່ານສາມາດຂຽນລາຍລະອຽດເພີ່ມເຕີມກ່ຽວກັບພື້ນຫລັງເຊື້ອຊາດຂອງທ່ານໄດ້.* |
| ມາຈາກຮິສແປນິກ | *ນີ້ຖາມວ່າທ່ານເປັນຊາວຮິສແປນິກຫຼືລາຕິນ. ນີ້ແມ່ນຖືວ່າເປັນຊົນເຜົ່າ, ບໍ່ແມ່ນເຊື້ອຊາດ. ຫມາຍເພີ່ມເຕີມນອກຈາກກ່ອງເຊື້ອຊາດ.* |

ການສຳຫຼວດປະຊາກອນ ປີ 2020 ຈະບໍ່ມີຄຳຖາມກ່ຽວກັບສັນຊາດ ຫຼື ການເປັນພົນລະເມືອງ.

ຖ້າຫາກວ່າມີຄົນຫຼາຍກວ່າຫົກຄົນອາໄສຢູ່ໃນເຮືອນຂອງທ່ານ, ທ່ານພຽງແຕ່ຕ້ອງໃຫ້ຂໍ້ມູນພື້ນຖານ ສຳລັບຄົນທີ່ 7 ຄົນແລະຄົນຕໍ່ໆ ມາ. ຂໍ້ມູນພື້ນຖານແມ່ນຊື່, ອາຍຸ, ວັນເດືອນປີເກີດ, ເພດ, ເຊື້ອຊາດ, ແລະວ່າບຸກຄົນນັ້ນມີຄວາມກ່ຽວຂ້ອງກັບບຸກຄົນທີ່ເຮັດແບບຟອມແນວໃດ.

## ການສຳຫຼວດສຳມະໂນຄົວປີ 2020 ຈະບໍ່ຖາມຫຍັງຈາກຂ້ອຍ?

**ແບບຟອມນີ້ຈະບໍ່ຖາມກ່ຽວກັບການເຂົ້າເມືອງ ຫຼື ສັນຊາດ ຫຼື ການເປັນພົນລະເມືອງຂອງທ່ານ. ແບບຟອມກໍ່ຍັງຈະບໍ່ຂໍເອົາເລກປະກັນສັງຄົມຂອງທ່ານ.**

## ຂ້ອຍຕ້ອງຕອບຄຳຖາມທັງຫມົດບໍ່?

ກົດຫມາຍຂອງລັດຖະບານກາງກຳນົດໃຫ້ທຸກຄົນເຂົ້າຮ່ວມໃນການສຳຫຼວດສຳມະໂນຄົວແລະຕອບຄຳຖາມທັງຫມົດ. ຜູ້ທີ່ຕອບໃຫ້ຊື່ແລະທີ່ຢູ່ຂອງພວກເຂົາ, ແຕ່ວ່າຂ້າມຄຳຖາມຂໍ້ຫຼືສອງຂໍ້, ກໍ່ຍັງຈະຖືກນັບ. ຖ້າທ່ານຂ້າມຄຳຖາມຈຳນວນຫນຶ່ງຫຼືບໍ່ຕອບຄຳຖາມກ່ຽວກັບການສຳຫຼວດທັງຫມົດ, ພະນັກງານສຳຫຼວດຈະມາຮອດບ້ານຂອງທ່ານເພື່ອຂໍຂໍ້ມູນທີ່ຂາດຫາຍໄປ. ຕອບຄຳຖາມທຸກຂໍ້ຢ່າງຖືກຕ້ອງ; ຢ່າຕົວະເວລາຕອບການສຳສຳຫຼວດສຳມະໂນຄົວ.

## ຄຳຕອບຂອງຂ້ອຍເປັນຄວາມລັບບໍ່? ການຕອບສຳຫຼວດສຳມະໂນຄົວໃນປີ 2020 ເປັນອັນຕະລາຍກັບຂ້ອຍໄດ້ບໍ່?

- <u>ການຮັກສາຄວາມລັບ</u>: ຂໍ້ມູນການສຳຫຼວດສຳມະໂນຄົວທັງຫມົດເປັນຄວາມລັບ. ຕາມກົດຫມາຍ, ກົມສຳຫຼວດສຳມະໂນຄົວບໍ່ສາມາດແບ່ງປັນຂໍ້ມູນຂອງບຸກຄົນໃດໆ ໃຫ້ກັບຜູ້ໃດ, ລວມທັງຜູ້ໃຊ້ອຳນາດທາງການເຂົ້າເມືອງ, ອົງກອນຂອງລັດຖະບານອື່ນໆ ແລະຕໍ່ກັບສາທາລະນະ . ກົດຫມາຍລັດຖະບານກາງມີການປົກປ້ອງຄວາມລັບຢ່າງສູງສຸດສຳລັບຂໍ້ມູນການສຳຫຼວດສຳມະໂນຄົວແລະປົກປ້ອງຂໍ້ມູນຂອງທ່ານ.
- <u>ໂທດ</u>: ພະນັກງານຂອງກົມສຳຫຼວດສຳມະໂນຄົວທຸກຄົນສາມາດເຂົ້າເຖິງຂໍ້ມູນຂອງທ່ານໄດ້ສາບານໄວ້ດ້ວຍຊີວິດວ່າຈະປົກປ້ອງຂໍ້ມູນຂອງທ່ານ. ຖ້າຜູ້ໃດລະເມີດກົດຫມາຍນີ້, ມັນເປັນອາຊະຍາກຳຂອງລັດຖະບານກາງ; ມີການລົງໂທດຮ້າຍແຮງ, ລວມທັງການຕັດສິນໂທດຄຸກຂອງລັດຖະບານກາງເຖິງຫ້າປີ, ການປັບໃຫມເຖິງ 250,000 ໂດລາຫຼືທັງສອງ.
- <u>ການປົກປ້ອງຂໍ້ມູນ</u>: ນອກຈາກນັ້ນ, ຄຳຕອບທີ່ເກັບກຳໂດຍກົມສຳຫຼວດສຳມະໂນຄົວສາມາດນຳໃຊ້ເພື່ອວັດຖຸປະສົງທາງສະຖິຕິເທົ່ານັ້ນ. ກົມສຳຫຼວດສຳມະໂນຄົວເຜີຍແຜ່ສະຖິຕິລວມທັງຫມົດເທົ່ານັ້ນ ແລະອາດຈະບໍ່ເຜີຍແຜ່ຂໍ້ມູນທີ່ຈະລະບຸຕົວບຸກຄົນ, ທຸລະກິດຫຼືອົງກອນ. ອົງກອນຂອງລັດຖະບານກາງ, ຂອງລັດ, ແລະຂອງລັດຖະບານ ຫ້າມບໍ່ໃຫ້ນຳໃຊ້ຂໍ້ມູນສະຖິຕິທີ່ຖືກສ້າງຂຶ້ນໂດຍກົມສຳຫຼວດສຳມະໂນຄົວທີ່ເຮັດໃຫ້ເກີດຄວາມເສຍຫາຍກັບບຸກຄົນທີ່ຕອບການສຳຫຼວດສຳມະໂນຄົວ.

## ແລ້ວຖ້າຂ້ອຍຕ້ອງການຄວາມຊ່ວຍເຫຼືອດ້ານພາສາເພື່ອປະກອບການສໍາຫຼວດສໍາມະໂນຄົວປີ 2020?

**ທາງອອນໄລນ໌:** ແບບຟອມການຕອບຄໍາຖາມດ້ວຍຕົນເອງທາງອິນເຕີເນັດມີໃຫ້ 12 ພາສາທີ່ບໍ່ແມ່ນພາສາອັງກິດລວມທັງຈີນ (ຢ່າງງ່າຍ), ພາສາຍີ່ປຸ່ນ, ພາສາເກົາຫຼີ, ພາສາຕາກາລັອກ, ແລະພາສາ ຫວຽດນາມ.

**ທາງໂທລະສັບ:** ການຊ່ວຍເຫຼືອທາງໂທລະສັບມີໃຫ້ໃນພາສາອັງກິດແລະພາສາທີ່ບໍ່ແມ່ນພາສາອັງກິດ 12 ພາສາ ລວມທັ້ງ ພາສາຈີນ (ແມນດາຣິນແລະແຄນໂຕນີສ), ພາສາຍີ່ປຸ່ນ, ພາສາເກົາຫຼີ, ພາສາ ຕາກາລັອກ, ແລະພາສາຫວຽດນາມ. ຜ່ານຫມາຍເລກໂທຟຣີຂອງກົມສໍາຫຼວດສໍາມະໂນຄົວແຕ່ລະພາສາ, ຜູ້ໂທສາມາດໄດ້ຮັບຂໍ້ມູນເພີ່ມເຕີມກ່ຽວກັບການສໍາຫຼວດສໍາມະໂນຄົວ, ຖາມຄໍາຖາມແລະຕອບຄໍາຖາມການສໍາຫຼວດສໍາມະໂນຄົວຂອງເຂົາເຈົ້າຜ່ານທາງໂທລະສັບໄດ້.

**ທາງເຈ້ຍ:** ເຈ້ຍແບບຟອມມີໃຫ້ໃນພາສາອັງກິດແລະພາສາສະເປນເທົ່ານັ້ນ.

**ແຫຼ່ງຂໍ້ມູນການຊ່ວຍເຫຼືອດ້ານພາສາ:** ກົມສໍາຫຼວດສໍາມະໂນຄົວກໍາລັງຜະລິດປະມວນຄໍາສັບພາສາ, ບັດລະບຸພາສາ, ແລະຄູ່ມືພາສາໃນ 59 ພາສາທີ່ບໍ່ແມ່ນພາສາອັງກິດ ເຊິ່ງຈະມີໃຫ້ຢູ່ເວັບໄຊທ໌ www.2020census.gov/en/languages.html.

*ທ່ານສາມາດຊອກຫາຂໍ້ມູນກ່ຽວກັບການສໍາຫຼວດສໍາມະໂນຄົວ, ລວມທັງເອກະສານຂໍ້ມູນເພື່ອໃຫ້ສະມາຊິກຊຸມຊົນແລະອົງກອນຊຸມຊົນຂອງທ່ານທີ່ www.CountUsIn2020.org/resources.*